ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ


ສຳນັກງານ ຄຄຊ
ເຂົ້າ
ເລກທີ 0284
ວັນທີ 13 MAR 2018
ໂທລະສັບ 021 217770


ເລກທີ: 012 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 09 ມີນາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 26/02-02/03/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,27% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກຂອງເດືອນ 02/2018 ເພີ່ມຂຶ້ນ ຈາກ 124,3 ຈຸດ ໃນເດືອນຜ່ານມາ ມາເປັນ 130,8 ຈຸດ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດຫຼຸດລົງຈາກ 220.000 ຄົນ ໃນເດືອນຜ່ານມາ[1] ມາເປັນ 210.000 ຄົນ ຂອງອາທິດທີ 24/02/2018.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19-23/02/2018 | ອາທິດນີ້ 26/02-02/03/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2310 | 1,2277 | 0,27% |
| ເຢນ/ໂດລາ | 106,87 | 105,75 | 1,06% |
| ບາດ/ໂດລາ | 31,45 | 31,45 | 0,00% |
| ເປໂຊ/ໂດລາ | 51,73 | 51,791 | -0,34% |
| ຣູເປັຍ/ໂດລາ | 13.665,00 | 13.755,00 | -0,65% |
| ໂດລາສິງກະໂປ/ໂດລາ | 1,3225 | 1,3207 | 0,14% |
| ຢວນ/ໂດລາ | 6,3340 | 6,3454 | -0,18% |

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,62% ຈາກ 60,98 ໂດລາ/ບາເຣວ ມາເປັນ 59,38 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ເພີ່ມຂຶ້ນຈາກ 1,62 ລ້ານບາເຣວ ໃນອາທິດຜ່ານມາ[2] ມາເປັນ 3,02 ລ້ານບາເຣວ ຂອງອາທິດທີ 23/02/2018.

- ສຳລັບລາຄາຄຳຫຼຸດລົງ 0,91% ຈາກ 1.328,25 ໂດລາ/ອອນ ມາເປັນ 1.316,21 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ແລ້ວຫັນມາຖືຄອງເງິນໂດລາແທນ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ແລະ ອ່ອນຄ່າລົງ 0,18% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,03% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,53% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 23/02/2018 | | | ອາທິດນີ້ 02/03/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[3] | | | | | | | | | | | | |
| ໂດລາ | 8.292,86 | 8.314,98 | 8.306,67 | 8.297,43 | 8.321,82 | 8.310,35 | -0,05% | -0,08% | -0,04% | 0,05% | 0,06% | 0,03% |
| ບາດ | 264,14 | 265,70 | 265,05 | 264,42 | 266,18 | 265,52 | -0,11% | -0,18% | -0,18% | -3,55% | -3,54% | -3,53% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 0,88% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 9,39%;

- ປະລິມານເງິນ M2 ຫຼຸດລົງ 0,14% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 9,28%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (23/02-02/03/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 2,64 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 31,04 ລ້ານໂດລາ ແລະ ຂາຍໂດລາໄດ້ 28,40 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 399,47 ລ້ານບາດ (ໃນນີ້ຊື້ບາດໄດ້ 239,92 ລ້ານບາດ ແລະ ຂາຍບາດໄດ້ 639,39 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 42,68% ແລະ ເງິນບາດເພີ່ມຂຶ້ນ 1,85%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 5,40 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 20 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 9,37 ລ້ານໂດລາ ແລະ ເງິນບາດ ຈຳນວນ 128,88 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າ: ເງິນໂດລາບໍ່ມີການຊື້-ຂາຍ ແຕ່ຊື້ເງິນບາດຈຳນວນ 600 ລ້ານບາດ.

---

[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 16-22/02/2018 | | ອາທິດນີ້ 23/02/2018-01/03/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **26,69** | **232,05** | **31,04** | **239,92** | **16,30%** | **3,39%** |
| - ທ/ຄທຸລະກິດລັດ | 10,35 | 66,95 | 16,21 | 91,42 | 56,62% | 36,55% |
| - ທ/ຄທຸລະກິດອື່ນໆ | 16,34 | 165,10 | 14,83 | 148,50 | -9,24% | -10,05% |
| **2. ການຂາຍເງິນຕາຕ່າງປະເທດ** | **14,97** | **631,30** | **28,40** | **639,39** | **89,71%** | **1,28%** |
| - ທ/ຄທຸລະກິດລັດ | 4,49 | 195,64 | 14,08 | 233,56 | 213,59% | 19,38% |
| - ທ/ຄທຸລະກິດອື່ນໆ | 10,48 | 435,66 | 14,32 | 405,83 | 36,64% | -6,85% |
| **ຊື້-ຂາຍສຸດທິທທກ** | **11,72** | **-399,25** | **2,64** | **-399,47** | **-77,47%** | **0,06%** |
| - ຜິດດ່ຽງຊື້-ຂາຍ | 43,91% | -172,05% | 8,51% | -166,50% | -80,62% | -3,23% |
| **- ມູນຄ່າການຊື້-ຂາຍ** | **41,66** | **863,35** | **59,44** | **879,31** | **42,68%** | **1,85%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **0,50** | **0,00** | **-5,40** | **-20,00** | | |
| - ທຫລຊື້ຈາກທທກ | 0,50 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 5,40 | 20,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **8,72** | **183,60** | **9,37** | **128,88** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **600,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 600,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 02/2018 ຄາດວ່າຈະຢູ່ໃນລະດັບ 0,99% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 63,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 14,75 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 6,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 61,94 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 820 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 52 ສະບັບ ເທົ່າກັບ 5,96% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 415,50 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 53,57 ຕື້ກີບ ເທົ່າກັບ 14,80% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23/02-01/03/2018) ມີທັງໝົດ 3.853 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.804 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 409,82 ຕື້ກີບ ຈາກ 859,18 ຕື້ກີບ ມາເປັນ 1.269 ຕື້ກີບ ເທົ່າກັບ 47,69%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 49 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ ຈຳນວນ 134,95 ຕື້ກີບ ຈາກ 61,59 ຕື້ກີບ ມາເປັນ 196,54 ຕື້ກີບ ເທົ່າກັບ 219,11%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 950,11 ຈຸດ ເພີ່ມຂຶ້ນ ຈາກ 939,22 ຈຸດ ຫຼື ເທົ່າກັບ 1,66% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 715.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,91 ຕື້ກີບ ເພີ່ມຂຶ້ນ 104,22% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 26,26% ຂອງມູນຄ່າການຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| BCEL | 76.600 | 442.180.000 | 5.800 | **579.000** | **3.325.955.000** | **5.900** | 655,87 | 652,17 | 100 | 1,72 |
| EDL-GEN | 331.100 | 1.463.975.000 | 4.400 | **128.300** | **571.585.000** | **4.550** | -61,25 | -60,96 | 150 | 3,41 |
| LWPC | 100 | 720.000 | 7.200 | **1.500** | **9.370.000** | **5.300** | 1.400,00 | 1.201,39 | -1.900 | -26,39 |
| PTL | 3.200 | 6.400.000 | 2.000 | **400** | **775.000** | **1.900** | -87,50 | -87,89 | -100 | -5,00 |
| SVN | 100 | 290.000 | 2.900 | **100** | **295.000** | **2.950** | - | 1,72 | 50 | 1,72 |
| PCD | 2.900 | 4.100.000 | 1.500 | **5.900** | **8.200.000** | **1.400** | 103,45 | 100,00 | -100 | -6,67 |
| ທັງໝົດ | 414.000 | 1.917.665.000 | | **715.200** | **3.916.180.000** | | 72,75 | 104,22 | | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມວຽກງານຕ່າງໆ: ❶ ກອງປະຊຸມຄະນະສະເພາະກິດແກ້ໄຂກໍລະນີເຈົ້າໜ້າທີ່ພາສີໄທດ່ານສາກົນຂົວມິດຕະພາບລາວ-ໄທແຫ່ງທີ 1 ຍຶດເງິນ 98 ລ້ານບາດ ທີ່ ກົມຕຳຫຼວດເສດຖະກິດ, ❷ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❸ ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຫ້ອງການປະຈຳປີ 2017 ແລະ ທິດທາງແຜນການປີ 2018 ແລະ ພິທີປັບປຸງການຈັດຕັ້ງຂອງຫ້ອງການ ທີ່ (ທຫລ), ❹ ກອງປະຊຸມຄະນະຊີ້ນຳລວມ ສະມາຊິກອົງການຄຸ້ມຄອງຫຼັກຊັບສາກົນ (IOSCO) ຊຸດໃໝ່ ຄັ້ງທີ 1 ທີ່ (ສຄຄຊ), ❺ ກອງປະຊຸມຄົບຄະນະເປີດກວ້າງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະຈຳປີ 2017 ທີ່ (ຫ້ອງປະຊຸມແຫ່ງຊາດ), ❻ ກອງປະຊຸມທົບທວນຄືນການຮ່ວມມືລະຫວ່າງ ສປປ ລາວ ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຢູ່ ສປປ ລາວ (NIGOs) ທີ່ (ຫ້ອງປະຊຸມແຫ່ງຊາດ), ❼ ກອງປະຊຸມຄະນະກະກຽມໄປຖອດຖອນບົດຮຽນຢູ່ ສປ. ຈີນ (ວຽກ CDB) ທີ່ (ທຫລ), ❽ ກອງປະຊຸມສຳມະນາກ່ຽວກັບການສ້າງຄວາມເຂັ້ມແຂງໃນການຕ້ານອາຊະຍາກອນຂ້າມຊາດ ຂອງໂຄງການລຸກຊຳບວກ ທີ່ (ໂຮງແຮມດອນຈັນພາເລດສ) ແລະ ❾ ຝຶກອົບຮົມໃນຫົວຂໍ້: "ທັກສະການຄຸ້ມຄອງພະນັກງານຂອງຜູ້ບໍລິຫານລະດັບປະຕິບັດການ" ເພື່ອເພີ່ມທະວີປະສິດທິຜົນຂອງສາຍງານ ທີ່ (ສະຖາບັນພັດທະນາຊັບພະຍາກອນມະນຸດລາວ-ຍີ່ປຸ່ນ).

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- ສືບຕໍ່ຄົ້ນຄວ້າແຜນຈັດຕັ້ງປະຕິບັດວຽກງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ຕໍ່ກັບແຜນຂອງອາຊຽນ;

- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນກຸມພາ 2018 ທີ່ (ທຫລ), ❷ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ມີນາ 2018 ທີ່ (ຫສນຍ), ❸ ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳ ຂອງ ທ່ານເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ຕໍ່ກອງປະຊຸມກະສິກຳ ແລະ ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2017 ແລະ ທິດທາງແຜນການປີ 2018 ທີ່ (ຫ້ອງປະຊຸມແຫ່ງຊາດ), ❹ ກອງປະຊຸມສະຫຼຸບວຽກງານສະຖາບັນການເງິນຈຸລະພາກ ປະຈຳປີ 2017 ທີ່ (ຫ້ອງປະຊຸມ ICTC), ❺ ກອງປະຊຸມປຶກສາຫາລືຜ່ານຮ່າງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ຮ່ວມກັບຂະແໜງການຂັ້ນສູນກາງ ທີ່ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງເວດລ້ອມ) ແລະ ❻ ກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮທີ່ຖືກຈັດຊັ້ນຂອງ ທທກ ສະບັບປັບປຸງ ທີ່ (ທຫລ).

ເຊັນແທນ ຫົວໜ້າຫ້ອງການ

ໄຊລືຊາ ຜູຍຍະວົງ